**ບົດລາຍງານ ຄວາມຄືບໜ້າຂອງການປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ພາຍໃຕ້ກົນໄກກອງປະຊຸມປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ຂັ້ນແຂວງ**
**( ແຂວງ ອຸດົມໄຊ, ຫຼວງນ້ຳທາ ແລະ ຜົ້ງສາລີ)**

**ຕາງໜ້າລາຍງານໂດຍ: ທ່ານ ທອງອິນ ຄຳສິມປອງ, ປະທານ ສຄອ ແຂວງອຸດົມໄຊ**

**ຕໍ່ ກອງປະຊຸມທຸລະກິດລາວ ຄັ້ງທີ 13**
**ວັນທີ 28 ກໍລະກົດ 2021**

- ຮຽນ ພະນະທ່ານ ນາຍົກລັດຖະມົນຕີ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.
- ຮຽນບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າກົມ, ຮອງກົມ, ບັນດາທ່ານເອກອັກຄະລັດຖະທູດ, ທູຕານຸທູດ, ຫົວໜ້າອົງການຈັດຕັ້ງສາກົນປະຈຳ ສປປ ລາວ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ບັນດາທ່ານຕາງໜ້ານັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ແຂກທຸກພາກສ່ວນທີ່ນັບຖື.

ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ເຂົ້າຮ່ວມ ກອງປະຊຸມທີ່ມີຄວາມໝາຍ, ຄວາມສຳຄັນຕໍ່ພາກທຸລະກິດໃນຄັ້ງນີ້.

**ບັນດາທ່ານ ທີ່ນັບຖື ແລະ ຮັກແພງ!**

ພູມສັນຖານ ຂອງ 3 ແຂວງພາກເໜືອ (ຫຼວງນ້ຳທາ, ອຸດົມໄຊ ແລະ ຜົ້ງ ສາລີ) ເປັນແຂວງທີ່ມີຈຸດພິເສດ, ມີສະພາບແວດລ້ອມເອື້ອອຳນວຍໃຫ້ກັບໂອກາດທາງດ້ານການຄ້າ, ຍ້ອນມີຊາຍແດນຕິດກັບ ຫຼາຍປະເທດເຊັ່ນ: ມຽນມາ, ສປ ຈີນ ແລະ ສສ ຫວຽດນາມ. ສະນັ້ນ, ການຄ້າລະຫວ່າງຊາຍແດນ ແມ່ນຖືວ່າມີຄວາມສຳຄັນຕໍ່ຊີວິດການເປັນຢູ່ຂອງປະຊາຊົນໃນຂົງເຂດນີ້. ພ້ອມດຽວກັນນີ້, ຍັງເປັນປັດໃຈພື້ນຖານໃນການສ້າງວຽກເຮັດງານທຳ ແລະ ເກີດມີການຜະລິດສິນຄ້າຕ່າງໆ ເພື່ອສົ່ງອອກໄປບັນດາປະເທດໃກ້ຄຽງ.

**ບັນດາທ່ານທີ່ເຄົາລົບ!**

ຂ້າພະເຈົ້າຂໍຕາງໜ້າໃຫ້ 3 ແຂວງພາກເໜືອ (ຫຼວງນ້ຳທາ, ອຸດົມໄຊ ແລະ ຜົ້ງສາລີ) ລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດວຽກງານ ການປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດຂອງສາມແຂວງພາກເໜືອ ໂດຍ ປະຈຸບັນ ແມ່ນໄດ້ຮັບການສະໜັບສະໜູນຈາກ

ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນເພື່ອສົ່ງອອກຢູ່ສາມແຂວງພາກເໜືອຂອງ ສປປ ລາວ ຫຼື ໂຄງການ ECL.

ພາຍໃຕ້ກົນໄກກອງປະຊຸມປຶກສາຫາລື ລະຫວ່າງພາກລັດ ແລະ ພາກທຸລະກິດ ລະດັບແຂວງ ທີ່ມີພະແນກ ອຸດສາຫະກໍາ ແລະ ການຄ້າ ເປັນຈຸດປະສານງານຂອງພາກລັດ, ສະພາການຄ້າ ແລະ ອຸດສາຫະກໍາແຂວງ ເປັນກອງເລຂາ, ໄດ້ດໍາເນີນຂະບວນການປຶກສາຫາລືຂອງພາກທຸລະກິດຮອບທໍາອິດ ໃນລະຫວ່າງເດືອນ ທັນວາ ປີ 2019. ພວກເຮົາສາມາດເກັບກໍາບັນຫາໄດ້ 22 ບັນຫາ: 6 ບັນຫາຢູ່ແຂວງ ຫຼວງນໍ້າທາ, 6 ບັນຫາຢູ່ແຂວງ ອຸດົມໄຊ ແລະ 10 ບັນຫາຢູ່ແຂວງ ຜົ້ງສາລີ.

**ບັນຫາທີ່ໄດ້ຮັບການແກ້ໄຂ ຫຼື ໄດ້ຮັບຄໍາຕອບທີ່ຊັດເຈນແລ້ວມີດັ່ງນີ້:**

1. ການຂໍອະນຸຍາດ ນໍາເຂົ້າແນວພັນສັດປີກ (ແຂວງອຸດົມໄຊ)
2. ການເກັບຄ່າຊົບພະຍາກອນຕໍ່ກັບສິນຄ້າປະເພດໝາກແໜ່ງຈາກສວນປູກ (ແຂວງຜົ້ງສາລີ)

**ບັນຫາທີ່ມີຄວາມຄືບໜ້າໃນການແກ້ໄຂ ແລະ ຈະສືບຕໍ່ປຶກສາຫາລື:**

1. ການເຂົ້າຫາແຫຼ່ງທຶນຂອງວິສາຫະກິດ (ທັງ 3 ແຂວງ)
2. ການສົ່ງອອກພືດກະສິກໍາຕ່າງໆເຊັ່ນ: ຄວາມຫຍຸ້ງຍາກໃນຂັ້ນຕອນການສົ່ງອອກ, ການຮັບຮູ້ຂໍ້ມູນໂອກາດສົ່ງອອກພືດກະສິກໍາ ແລະ ການເກັບຄ່າທໍານຽມທີ່ບໍ່ໄດ້ລະບຸໄວ້ໃນນິຕິກໍາທີ່ໄດ້ກໍານົດໄວ້. (ທັງ 3 ແຂວງ)

ໃນປີ 2021 ນີ້, ກອງປະຊຸມປຶກສາຫາລືພາກທຸລະກິດ ຮອບທີ 2 ເພື່ອເກັບກໍາບັນຫາເພີ່ມເຕີມ ແມ່ນໄດ້ຈັດຕັ້ງປະຕິບັດສໍາເລັດແລ້ວ ໃນໄຕມາດທີ 1 ຂອງປີ ແລະ ສາມາດສັງລວມບັນຫາທີ່ຖືກສະເໜີໄດ້ທັງໝົດ 39 ບັນຫາ, ແບ່ງອອກເປັນ 10 ບັນຫາ ຢູ່ແຂວງ ຫຼວງນໍ້າທາ, 14 ບັນຫາ ຢູ່ແຂວງ ອຸດົມໄຊ ແລະ 15 ບັນຫາຢູ່ແຂວງ ຜົ້ງສາລີ. ໃນບັນດາ 39 ບັນຫານີ້, ມີບາງບັນຫາທີ່ພວກເຮົາເຫັນວ່າ ບໍ່ສາມາດແກ້ໄຂບັນຫາຢູ່ຂັ້ນແຂວງໄດ້ ເຊິ່ງພວກເຮົາຈະສະເໜີຢູ່ຂັ້ນສູນກາງ ຜ່ານກົນໄກການປຶກສາຫາລືຂອງກອງປະຊຸມທຸລະກິດລາວຄັ້ງຕໍ່ໄປ ເພື່ອຊ່ວຍແກ້ໄຂບັນຫາທີ່ເປັນບູລິມະສິດ, ເຊິ່ງປະກອບມີດັ່ງນີ້:

**ບັນຫາທີ່ຕິດພັນກັບນິຕິກໍາ**

1. ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມປະຈໍາປີ ມີຄ່າໃຊ້ຈ່າຍທີ່ສູງ (ແຂວງ ອຸດົມໄຊ)
2. ການຊໍາລະສະສາງຂອງພາກລັດໃຫ້ແກ່ ບໍລິສັດໃນໂຄງການລົງທຶນຂອງລັດ (ທັງ 3 ແຂວງ)

3. ການຄວບຄຸມການເກັບຊື້ຜົນຜະລິດກະສິກຳ, ບາງລາຍການຍັງບໍ່ມີມາດຕະການທີ່ຊັດເຈນ (ແຂວງ ຫຼວງນ້ຳທາ ແລະ ແຂວງ ອຸດົມໄຊ)

**ບັນຫາທີ່ຕິດພັນກັບການຈັດຕັ້ງປະຕິບັດນິຕິກຳ**

1. ການອະນຸມັດເອກະສານສົ່ງອອກ ຂອງຂະແໜງການກ່ຽວຂ້ອງ, ມີຫຼາຍຂັ້ນຕອນຫຍຸ້ງຍາກ , ໃຊ້ເວລາດົນ (ທັງ 3 ແຂວງ)
2. ການເກັບຄ່າທຳນຽມໃນການປະກອບເອກະສານກູ້ຢືມທຶນຈາກທະນາຄານ ຫຼື ສະຖາບັນການເງິນ ຢູ່ຂັ້ນບ້ານ ມີຄ່າໃຊ້ຈ່າຍສູງ ແລະ ບໍ່ເປັນເອກະພາບ (ແຂວງ ອຸດົມໄຊ ແລະ ແຂວງ ຜົ້ງສາລີ)

**ບັນຫາທີ່ຕິດພັນກັບ ນະໂຍບາຍ ແລະ ມາດຕະການສົ່ງເສີມ**

1. ນະໂຍບາຍຜ່ອນຜັນຂອງພາກລັດຕໍ່ພາກທຸລະກິດໃນຊ່ວງໄລຍະທີ່ໄດ້ຮັບຜົນກະທົບຈາກການລະບາດຂອງ ໂຄວິດ-19 ໂດຍສະເພາະແມ່ນ ການເຂົ້າເຖິງແຫຼ່ງທຶນດອກເບ້ຍຕ່ຳຈາກທະນາຄານ ແລະ ຄ່າໄຟຟ້າ (ຢູ່ 3 ແຂວງ)
2. ການສະຫງວນສິດໃນການຂຸດຄົ້ນ, ຊື້-ຂາຍ ເຄື່ອງປ່າຂອງດົງ ໃຫ້ແກ່ປະຊາຊົນທ້ອງຖິ່ນ (ແຂວງ ອຸດົມໄຊ ແລະ ແຂວງ ຜົ້ງສາລີ).

ບັນດາບັນຫາເຫຼົ່ານີ້ ແມ່ນສິ່ງທ້າທາຍທີ່ພາກທຸລະກິດກຳລັງພົບພໍ້ຢູ່ໃນຂະນະນີ້ ແລະ ຈະໄດ້ສືບຕໍ່ ປຶກສາຫາລືກັບພາກລັດເພື່ອຫາທາງອອກຮ່ວມກັນ ໃນກອງປະຊຸມປຶກສາຫາລື ລະຫວ່າງພາກລັດ ແລະ ພາກທຸລະກິດຢູ່ຂັ້ນແຂວງ ແລະ ຂັ້ນສູນກາງ ໃນນີ້ກໍເພື່ອເປັນການສົ່ງເສີມ ແລະ ຊຸກຍູ້ໃຫ້ບັນດາຫົວໜ່ວຍທຸລະກິດຕ່າງໆປະກອບສ່ວນສ້າງສາເສດຖະກິດ ແລະ ນຳລາຍໄດ້ເຂົ້າສູ່ປະເທດຊາດ.

**ບັນດາທ່ານແຂກ ທີ່ມີກຽດ!**

ໃນໄລຍະຜ່ານມາ, ພາກລັດ ກໍໄດ້ມີຄວາມພະຍາຍາມເອົາໃຈໃສ່ ໃນການປັບປຸງນິຕິກຳເພື່ອອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດ, ປັບປຸງກົນໄກ, ລະບຽບການ ແລະ ແບບແຜນວິທີຈັດຕັ້ງປະຕິບັດ ເພື່ອໃຫ້ບໍລິການແກ່ພາກທຸລະກິດຂອງພວກເຮົາ.

ແຕ່ດັ່ງບັນດາທ່ານຮັບຮູ້ແລ້ວວ່າ ສະພາບຕົວຈິງ ຂອງການດຳເນີນທຸລະກິດ ຂອງພວກເຮົາແມ່ນມີຄວາມທ້າທາຍ ແລະ ປະສົບກັບບັນຫາຫຼາຍດ້ານ, ບໍ່ວ່າຈະເປັນການແຂ່ງຂັນ, ການເຂົ້າເຖິງຕະຫຼາດ, ດ້ານການຜະລິດ, ການບໍລິການ, ການເຂົ້າຫາແຫຼ່ງທຶນ, ການພັດທະນານະວັດຕະກຳ ແລະ ອື່ນໆ. ນອກນັ້ນ ພວກເຮົາຍັງປະເຊີນກັບບັນຫາທີ່ທົ່ວໂລກກຳລັງປະເຊີນຢູ່ໃນຂະນະນີ້, ກໍຄື

ການລະບາດຂອງເຊື້ອພະຍາດຈຸລະໂລກອັກເສບປອດສາຍພັນໃໝ່ ຫຼື ເອີ້ນວ່າ ໂຄວິດ 19, ເຮັດໃຫ້ສະພາບເສດຖະກິດຂອງພວກເຮົາຕ້ອງຫົດຖອຍລົງໄປຕື່ມ.

ດັ່ງນັ້ນ ສະພາການຄ້າ ແລະ ອຸດສາຫະກໍາຂອງພວກເຮົາ ກໍ່ຈະເປັນສູນກາງລວບລວມເອົາບັນຫາການດໍາເນີນທຸລະກິດຂອງແຂວງ ເພື່ອລາຍງານຂອດຄົງຄ້າງ ໃຫ້ພາກລັດຮັບຊາບເປັນລາຍລັກອັກສອນ ເປັນແຕ່ລະໄລຍະ. ເຊິ່ງ ພວກເຮົາ ກໍ່ຂໍຮຽນສະເໜີມາຍັງ ລັດຖະບານ, ເພີ່ມທະວີການຊີ້ນໍາແກ້ໄຂບັນຫາຂໍ້ຫຍຸ້ງຍາກທີ່ສະພາການຄ້າ ແລະ ອຸດສາຫະກໍາໄດ້ສ່ອງແສງລາຍງານຕໍ່ພາກລັດ ເພື່ອເຮັດໃຫ້ການແກ້ໄຂບັນຫາຂອງພາກທຸລະກິດໃນຂັ້ນແຂວງ ແລະ ເມືອງ ຕໍ່ກັບຂໍ້ຫຍຸ້ງຍາກທີ່ພວກເຮົາສັງລວມມາໄດ້ນັ້ນໄດ້ມີທິດທາງແກ້ໄຂ ເພື່ອເພີ່ມທະວີຄວາມອາດສາມາດການແຂ່ງຂັນຂອງຜູ້ປະກອບການທີ່ຢູ່ແຂວງ.

ສຸດທ້າຍນີ້, ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ບັນດາແຂກຜູ້ມີກຽດທຸກທ່ານ, ຕາງໜ້າຈາກຂະແໜງການພາກລັດ, ຕາງໜ້າຫົວໜ່ວຍທຸລະກິດ, ທີ່ເປີດໂອກາດໃຫ້ຂ້າພະເຈົ້າໄດ້ ຕາງໜ້າໃຫ້ ທຸລະກິດ 3 ແຂວງພາກເໜືອ ລາຍງານຄວາມຄືບໜ້າຂອງການປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ຂັ້ນແຂວງ ແລະ ຂໍອວຍພອນໃຫ້ກອງປະຊຸມນີ້ ຈົ່ງປະສົບຜົນສໍາເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້.

**ຂໍຂອບໃຈ**